ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ສໍາມະນາກ່ຽວກັບ ການໃຫ້ກູ້ຢືມຮ່ວມ



ໃນວັນທີ 04 ກໍລະກົດ 2023 ນີ້, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດສໍາມະນາກ່ຽວກັບ ການໃຫ້ກູ້ຢືມຮ່ວມ (Syndicated Loan) ຂຶ້ນ ໂດຍການເປັນປະທານຮ່ວມລະຫວ່າງທ່ານ ນ ມະໂນລາ ເມືອງມະນີ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທຫລ ແລະ ທ່ານ ປຣະກອບ ພຽນຈະເລີນ, ປະທານຄະນະເຈົ້າໜ້າທີ່ດ້ານລູກຄ້າທຸລະກິດຂະໜາດໃຫຍ່ ແລະ ທຸລະກິດທະນາຄານເພື່ອການລົງທຶນ, ທະນາຄານ ກຸງສີອະຍຸດທະຍາ ຈໍາກັດ (ມະຫາຊົນ), ມີບັນດາວິຊາການພາຍໃນ ທຫລ ເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດສໍາມະນາໃນຄັ້ງນີ້, ແມ່ນຖືເປັນການຮ່ວມມືໜຶ່ງທີ່ສໍາຄັນ ເພື່ອແລກປ່ຽນບົດຮຽນ ສ້າງຄວາມຮັບຮູ້ຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບຜະລິດຕະພັນດັ່ງກ່າວ. ສະນັ້ນ, ຈຶ່ງຖືເປັນເງື່ອນໄຂໃຫ້ທະນາຄານໃດທີ່ມີຜະລິດຕະພັນນີ້ກໍສາມາດແບ່ງປັນປະສົບການໃຫ້ຂໍ້ມູນແກ່ທະນາຄານທີ່ຍັງບໍ່ມີຜະລິດຕະພັນນີ້ ເພື່ອເປັນກໍລະນີສຶກສາຄົ້ນຄວ້າ ແລະ ເພີ່ມສິນເຊື່ອຮ່ວມ (ສິນເຊື່ອຮ່ວມແມ່ນໝາຍເຖິງການປ່ອຍເງິນກູ້ຮ່ວມກັນລະຫວ່າງ ທະນາຄານທຸລະກິດກັບທະນາຄານ ທຸລະກິດໃຫ້ກັບລູກຄ້າໃດໜຶ່ງ) ເນື່ອງຈາກສິນເຊື່ອຮ່ວມ ເປັນທາງເລືອກໜຶ່ງທີ່ຊ່ວຍໃຫ້ຜູ້ປ່ອຍກູ້ກະຈາຍຄວາມສ່ຽງ ແລະ ມີສ່ວນຮ່ວມໃນໂອກາດທາງການເງິນທີ່ມີມູນຄ່າສູງ.



ການສຳມະນາດັ່ງກ່າວ ແມ່ນໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ, ການນຳສະເໜີບົດຮຽນຈາກນັກວິທະຍາກອນ ດ້ວຍຄວາມເອົາໃຈໃສ່ ແລະ ຮັບຜິດຊອບສູງ ລວມທັງຮ່ວມກັນແລກປ່ຽນບົດຮຽນ ແລະ ຕັ້ງຄຳຖາມເຈາະຈີ້ມ ທີ່ກ່ຽວກັບວຽກງານຂອງ ສິນເຊື່ອຮ່ວມ ເຊິ່ງເປັນປະໂຫຍດຕໍ່ກັບຜູ້ເຂົ້າຮ່ວມ ສາມາດນຳເອົາເນື້ອໃນບົດຮຽນ ແລະ ປະສົບການ ເພື່ອນຳໄປໝູນໃຊ້ເຂົ້າໃນວຽກງານຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.




**ຂ່າວ-ພາບ: ສົມພົດ ທຳມະວົງ**

ຢູ່ເມືອງລາວໃຊ້ເງິນກີບລາວ